ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຂໍ້ຕົກລົງ

# ວ່າດ້ວຍເຄື່ອງໝາຍການຄ້າ ແລະ ຊື່ການຄ້າ

## ສາລະບານ


**ໝວດທີ 1 ບົດບັນຍັດທົ່ວໄປ** .......... 1

ມາດຕາ 1 ຈຸດປະສົງ .......... 1

ມາດຕາ 2 ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ .......... 1

ມາດຕາ 3 ການອະທິບາຍຄຳສັບ .......... 2

ມາດຕາ 4 ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງເຄື່ອງໝາຍການຄ້າ ແລະ ຊື່ການຄ້າ.......... 3

**ໝວດທີ 2 ການຈົດທະບຽນເຄື່ອງໝາຍການຄ້າ** .......... 3

ມາດຕາ 5 ປະເພດຂອງເຄື່ອງໝາຍ .......... 3

ມາດຕາ 6 ເຄື່ອງໝາຍທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ .......... 3

ມາດຕາ 7 ຂັ້ນຕອນການຍື່ນຄຳຮ້ອງ .......... 4

ມາດຕາ 8 ສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ .......... 4

ມາດຕາ 9 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ .......... 5

ມາດຕາ 10 ເງື່ອນໄຂຂອງຕົວຢ່າງເຄື່ອງໝາຍ .......... 5

ມາດຕາ 11 ລາຍການສິນຄ້າ ຫຼື ການບໍລິການ .......... 6

ມາດຕາ 12 ການຈັດໝວດສາກົນກ່ຽວກັບສິນຄ້າ ແລະ ການບໍລິການ .......... 6

ມາດຕາ 13 ຫຼັກການພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ .......... 6

ມາດຕາ 14 ການກວດສອບເບື້ອງຕົ້ນ .......... 7

ມາດຕາ 15 ການແຍກຄຳຮ້ອງ .......... 8

ມາດຕາ 16 ການເຜີຍແຜ່ຄຳຮ້ອງ .......... 8

ມາດຕາ 17 ການພິຈາລະນາການຄັດຄ້ານຄຳຮ້ອງ .......... 8

ມາດຕາ 18 ການກວດສອບເນື້ອໃນ .......... 9

ມາດຕາ 19 ການບໍ່ອະນຸຍາດໃຫ້ຖືສິດແຕ່ພຽງຜູ້ດຽວ .......... 10

ມາດຕາ 20 ການດັດແກ້ປະເພດເຄື່ອງໝາຍ .......... 10

ມາດຕາ 21 ການດັດແກ້ຄຳຮ້ອງ .......... 10

ມາດຕາ 22 ການເພີ່ມໝວດສິນຄ້າ ຫຼື ການບໍລິການ .......... 10

ມາດຕາ 23 ການຈົດທະບຽນເຄື່ອງໝາຍການຄ້າ .......... 11

ມາດຕາ 24 ການເຜີຍແຜ່ຜົນຂອງການຈົດທະບຽນ .......... 11

**ໝວດທີ 3 ການດຳເນີນການ ຫຼັງການຈົດທະບຽນເຄື່ອງໝາຍການຄ້າ** .......... 11

ມາດຕາ 25 ການປ່ຽນແປງຂໍ້ມູນ ຫຼັງການຈົດທະບຽນເຄື່ອງໝາຍການຄ້າ .......... 11

ມາດຕາ 26 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ .......... 11

ມາດຕາ 27 ການດັດແກ້ພາຍຫຼັງການຈົດທະບຽນ .......... 11

ມາດຕາ 28 ການຍົກເລີກ ຫຼື ລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າ .......... 12

ມາດຕາ 29 ອາຍຸການປົກປ້ອງ ........................................................................................ 12
ມາດຕາ 30 ການຕໍ່ອາຍຸການປົກປ້ອງ ................................................................................ 12
ມາດຕາ 31 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ ................................................... 13
ມາດຕາ 32 ການອະນຸຍາດນຳໃຊ້ ...................................................................................... 13

**ໝວດທີ 4 ການເປັນຜູ້ຕາງໜ້າໃນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດຳເນີນການອື່ນ** ........................ 14

ມາດຕາ 33 ບຸກຄົນທີ່ມີສິດເປັນຜູ້ຕາງໜ້າໃນການຈົດທະບຽນເຄື່ອງໝາຍການຄ້າ ແລະດຳເນີນການອື່ນ ...... 14
ມາດຕາ 34 ການແຕ່ງຕັ້ງຜູ້ຕາງໜ້າ ..................................................................................... 14
ມາດຕາ 35 ການມອບສິດ ................................................................................................ 14
ມາດຕາ 36 ການສິ້ນສຸດການເປັນຜູ້ຕາງໜ້າ ......................................................................... 15

**ໝວດທີ 5 ການທົບທວນຄືນ ແລະ ການແກ້ໄຂຂໍ້ຂັດແຍ່ງ ທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ** ........................................................................................................................ 15

ມາດຕາ 37 ການທົບທວນຄືນ ແລະ ການແກ້ໄຂຂໍ້ຜິດພາດ ......................................................... 15
ມາດຕາ 38 ການທົບທວນຄືນທາງດ້ານບໍລິຫານ ....................................................................... 15
ມາດຕາ 39 ການສະເໜີໃຫ້ຢຸດຊົ່ວຄາວ ................................................................................. 16
ມາດຕາ 40 ການພິຈາລະນາຄືນໃໝ່ ...................................................................................... 16
ມາດຕາ 41 ຂັ້ນຕອນການພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ.................................................. 16
ມາດຕາ 42 ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ................................................................ 17

**ໝວດທີ 6 ການສ້າງສຳນວນເອກະສານຂຶ້ນໃໝ່** ...................................................................... 17

ມາດຕາ 43 ສຳນວນເອກະສານເສຍຫາຍ ຫຼື ຊອກບໍ່ເຫັນ ............................................................. 17
ມາດຕາ 44 ການສ້າງສຳນວນເອກະສານຂຶ້ນໃໝ່.......................................................................... 17

**ໝວດທີ 7 ອົງການຄຸ້ມຄອງເຄື່ອງໝາຍການຄ້າ ແລະ ຊື່ການຄ້າ** ...................................................... 17

ມາດຕາ 45 ອົງການຄຸ້ມຄອງ ............................................................................................... 17
ມາດຕາ 46 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ ............................................................ 18
ມາດຕາ 47 ສິດ ແລະ ໜ້າທີ່ຂອງພະແນກວິທະຍາສາດແລະເຕັກໂນໂລຊີແຂວງ, ນະຄອນຫຼວງ .............. 18

**ໝວດທີ 8 ບົດບັນຍັດສຸດທ້າຍ** ........................................................................................... 19

ມາດຕາ 48 ການຈັດຕັ້ງປະຕິບັດ ......................................................................................... 19
ມາດຕາ 49 ຜົນສັກສິດ ..................................................................................................... 19

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ 2822 /ກວຕ
ນະຄອນຫຼວງວຽງຈັນ, ວັນທີ 17 DEC 2019

# ຂໍ້ຕົກລົງ
# ວ່າດ້ວຍເຄື່ອງໝາຍການຄ້າ ແລະ ຊື່ການຄ້າ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມຊັບສິນທາງປັນຍາ ສະບັບເລກທີ 1616/ກວຕ.ກຊປ, ລົງວັນທີ 31 ທັນວາ 2018.

## ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານເຄື່ອງໝາຍການຄ້າ ແລະ ຊື່ການຄ້າ ເປັນຕົ້ນ ການຈົດທະບຽນ, ການດຳເນີນການຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອົງການຄຸ້ມຄອງວຽກງານ ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ ເພື່ອຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບ ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

### ມາດຕາ 2 ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ

ເຄື່ອງໝາຍການຄ້າ ແມ່ນ ສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ນຳໃຊ້ກັບສິນຄ້າ ຫຼື ການບໍລິການ ເພື່ອຈຳແນກສິນຄ້າ ຫຼື ການບໍລິການຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງໃຫ້ແຕກຕ່າງຈາກສັນຍາລັກ ຂອງຄົນອື່ນ.

ຊື່ການຄ້າ ແມ່ນ ຊື່ຂອງວິສາຫະກິດທີ່ໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ. ຊື່ການຄ້າ ຈະເປັນ ຫຼື ບໍ່ເປັນສ່ວນໜຶ່ງຂອງເຄື່ອງໝາຍການຄ້າ ກໍຈະໄດ້ຮັບການປົກປ້ອງ ເຖິງວ່າບໍ່ໄດ້ຈົດທະບຽນ ກໍຕາມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ດັດແກ້, ຂໍຍົກເລີກບາງສ່ວນ ຫຼື ທັງໝົດ, ລົບລ້າງການຈົດທະບຽນເຄື່ອງໝາຍການຄ້າ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;
2. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ດັດແກ້, ຂໍຍົກເລີກບາງສ່ວນ ຫຼື ທັງໝົດ, ລົບລ້າງການຈົດທະບຽນເຄື່ອງໝາຍການຄ້າ;
3. **ຜູ້ຄັດຄ້ານ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;
4. **ການຄັດຄ້ານ** ໝາຍເຖິງ ບຸກຄົນທີສາມ ທີ່ໄດ້ລະບຸໄວ້ໃນຂໍ້ 3 ຂ້າງເທິງນີ້ ທີ່ໄດ້ຍື່ນຄຳ ສະເໜີຂໍຄັດຄ້ານຕໍ່ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ;
5. **ການຍົກເລີກ** ໝາຍເຖິງ ການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນເຄື່ອງໝາຍການຄ້າບາງສ່ວນ ຫຼື ທັງໝົດ ໂດຍເຈົ້າຂອງເອງ ຫຼື ບຸກຄົນທີສາມທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນເຄື່ອງໝາຍການຄ້າ ບາງສ່ວນ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ;
6. **ການລົບລ້າງ** ໝາຍເຖິງ ບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍລົບລ້າງການຈົດທະບຽນເຄື່ອງໝາຍການຄ້າທັງໝົດ;
7. **ໝວດ** ໝາຍເຖິງ ການຈັດໝວດຂອງສາກົນກ່ຽວກັບສິນຄ້າ ແລະ ການບໍລິການຕາມສົນທິສັນຍານີສ (Nice Agreement) ສຳລັບການຈົດທະບຽນເຄື່ອງໝາຍການຄ້າ;
8. **ການແຍກຄຳຮ້ອງ** ໝາຍເຖິງ ຜູ້ຮ້ອງຂໍໄດ້ແຍກຄຳຮ້ອງດຽວອອກເປັນສອງ ຫຼື ຫຼາຍສະບັບ ຊຶ່ງແຕ່ລະຄຳຮ້ອງທີ່ໄດ້ແຍກມານັ້ນ ຕ້ອງກ່ຽວຂ້ອງກັບເຄື່ອງໝາຍທີ່ຢູ່ໃນຄຳຮ້ອງຕົ້ນສະບັບ;
9. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍ ເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີສິດຕາມກົດໝາຍຕໍ່ກັບເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ ຫຼື ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;
10. **ຜູ້ອະນຸຍາດນຳໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ອອກໃບອະນຸຍາດນຳໃຊ້ສິດຕໍ່ກັບເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ;
11. **ຜູ້ໄດ້ຮັບອະນຸຍາດນຳໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບສິດນຳໃຊ້ຈາກເຈົ້າຂອງສິດຕໍ່ກັບເຄື່ອງໝາຍການຄ້າ ຫຼື ຊື່ການຄ້າ;
12. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ;
13. **ຜູ້ມອບສິດ** ໝາຍເຖິງ ເຈົ້າຂອງເຄື່ອງໝາຍທີ່ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ດຳເນີນການອື່ນ ນຳກົມຊັບສິນທາງປັນຍາ;
14. **ຜູ້ຕາງໜ້າ** ໝາຍເຖິງ ທະນາຍຄວາມ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງເຄື່ອງໝາຍໃນການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ດຳເນີນການອື່ນ ນຳກົມຊັບສິນທາງປັນຍາ.

**ມາດຕາ 4 ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງເຄື່ອງໝາຍການຄ້າ ແລະ ຊື່ການຄ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 26 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ມີສິດໄດ້ຮັບການປົກປ້ອງ, ການຍື່ນຄຳຮ້ອງຂໍຈົດທະບຽນ, ໄດ້ຮັບໃບຢັ້ງຢືນການຈົດທະບຽນ ແລະ ຕໍ່ອາຍຸໃບຢັ້ງຢືນການຈົດທະບຽນ, ດຳເນີນການແກ້ໄຂທາງດ້ານບໍລິຫານ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ດຳເນີນການເຄື່ອນໄຫວອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ຫຼື ຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ການຈົດທະບຽນເຄື່ອງໝາຍການຄ້າ

**ມາດຕາ 5 ປະເພດຂອງເຄື່ອງໝາຍ**

ເຄື່ອງໝາຍປະກອບມີ 4 ປະເພດ ດັ່ງນີ້:

1. ເຄື່ອງໝາຍການຄ້າ ແມ່ນ ສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ສາມາດຈຳແນກສິນຄ້າຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງໃຫ້ແຕກຕ່າງຈາກສັນຍາລັກຂອງຜູ້ອື່ນ. ສັນຍາລັກອາດເປັນ ຄຳສັບ ລວມທັງ ຄຳສັບທີ່ເປັນລວດລາຍ, ລາຍເຊັນ, ຊື່ບຸກຄົນ, ແບບຕົວເລກ, ອົງປະກອບເປັນຮູບຮ່າງ, ຮູບຊົງ, ຮູບແຕ້ມ, ຮູບຖ່າຍ, ຮູບພາບ, ຮູບສາມມິຕິ, ຮູບທີ່ມີການເຄື່ອນເໜັງ ຫຼື ສິ່ງຫຸ້ມຫໍ່ຂອງສິນຄ້າ ແລະ ການລວມກັນ ຫຼື ປະສົມປະສານຂອງຫຼາຍສີເຊັ່ນດຽວກັບການລວມກັນຂອງສັນຍາລັກໃດໜຶ່ງນັ້ນ.
2. ເຄື່ອງໝາຍບໍລິການ ແມ່ນ ສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ສາມາດຈຳແນກການບໍລິການຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ໃຫ້ແຕກຕ່າງຈາກສັນຍາລັກຂອງຜູ້ອື່ນ ຊຶ່ງແມ່ນສັນຍາລັກເຊັ່ນດຽວກັນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້.
3. ເຄື່ອງໝາຍຮັບຮອງ ແມ່ນ ເຄື່ອງໝາຍທີ່ນິຕິບຸກຄົນ ຫຼື ການຈັດຕັ້ງສ້າງຂຶ້ນເພື່ອນຳໃຊ້ໃນການຮັບຮອງມາດຕະຖານ ຫຼື ມີຄຸນລັກສະນະສະເພາະທີ່ເປັນເງື່ອນໄຂໃນການຮັບຮອງສິນຄ້າ ຫຼື ການບໍລິການ. ເຄື່ອງໝາຍດັ່ງກ່າວ ຈະຖືກນຳໃຊ້ໂດຍບຸກຄົນທີ່ສາມ ເພື່ອຊີ້ບອກເຖິງທີ່ມາ, ວັດຖຸດິບ, ວິທີການຜະລິດສິນຄ້າ, ວິທີການໃຫ້ການບໍລິການວ່າໄດ້ມາດຕະຖານດ້ານຄຸນນະພາບ, ຄວາມປອດໄພ, ຄວາມສະອາດ ແລະ ຖືກຜະລິດໂດຍບຸກຄົນທີ່ມີຄວາມຊ່ຽວຊານສະເພາະດ້ານໃດໜຶ່ງ.
4. ເຄື່ອງໝາຍລວມໝູ່ ແມ່ນ ເຄື່ອງໝາຍທີ່ຖືກຮັບຮອງໂດຍອົງການຈັດຕັ້ງລວມໝູ່ ເຊັ່ນ: ສະມາຄົມ, ສະຫະພັນ, ອົງການຈັດຕັ້ງທາງສັງຄົມອື່ນ, ສະຫະກອນ, ສະພາການຄ້າ ແລະ ອຸດສາຫະກຳ ຫຼື ອົງການຈັດຕັ້ງລວມໝູ່ອື່ນ. ເຄື່ອງໝາຍລວມໝູ່ ແມ່ນ ເຄື່ອງໝາຍການຄ້າຊຶ່ງມີພຽງແຕ່ສະມາຊິກຂອງອົງການຈັດຕັ້ງລວມໝູ່ເທົ່ານັ້ນເປັນຜູ້ນຳໃຊ້ ເພື່ອຊີ້ບອກວ່າສິນຄ້າ ຫຼື ການບໍລິການຂອງຕົນ ແຕກຕ່າງຈາກສິນຄ້າ ຫຼື ການບໍລິການຂອງພາກສ່ວນອື່ນ.

**ມາດຕາ 6 ເຄື່ອງໝາຍທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ**

ເຄື່ອງໝາຍທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ແລະ ບໍ່ຂັດກັບ ມາດຕາ 23 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 7 ຂັ້ນຕອນການຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ສາມາດຍື່ນຄໍາຮ້ອງຢູ່ນໍາກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຕາມແບບພິມຂອງ ກົມຊັບສິນທາງປັນຍາ ແລະ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ຍື່ນຢູ່ນໍາກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຢ່າງໜ້ອຍຕ້ອງປະຕິບັດໃຫ້ໄດ້ຕາມເງື່ອນໄຂຕໍ່າສຸດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 33 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາແລະ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
2. ກົມຊັບສິນທາງປັນຍາ ຕ້ອງຮັບເອົາຄໍາຮ້ອງ, ອອກໃບຮັບຄໍາຮ້ອງຊຶ່ງລະບຸ ເລກທີ ແລະ ວັນທີຍື່ນຄໍາຮ້ອງໃນກໍລະນີທີ່ຄໍາຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ;
3. ໃນກໍລະນີທີ່ ຄໍາຮ້ອງຫາກຍື່ນຜ່ານ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ພະແນກຕ້ອງຮັບເອົາຄໍາຮ້ອງ ແລະ ອອກໃບຮັບຄໍາຮ້ອງຊຶ່ງລະບຸເວລາ ແລະ ວັນທີຮັບຄໍາຮ້ອງ ໃນກໍລະນີທີ່ ຄໍາຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ ແລ້ວສົ່ງຕໍ່ໃຫ້ກົມເພື່ອດໍາເນີນການຕາມຂັ້ນຕໍ່ໄປ, ຫຼັງຈາກນັ້ນກົມຕ້ອງອອກໃບຮັບຄໍາຮ້ອງເຊັ່ນດຽວກັນກັບຄໍາຮ້ອງທີ່ຍື່ນໂດຍກົງຢູ່ນໍາກົມ;
4. ກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ຈະບໍ່ຮັບເອົາຄໍາຮ້ອງໃນກໍລະນີທີ່ ຄໍາຮ້ອງຫາກບໍ່ສອດຄ່ອງຕາມເງື່ອນໄຂຕໍ່າສຸດ;
5. ໃນກໍລະນີທີ່ ຜູ້ຮ້ອງຂໍຈົດທະບຽນ ຫາກມີຈຸດປະສົງຂໍຖອນຄໍາຮ້ອງ ຫຼື ຄໍາຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທໍານຽມ ແລະ ຄ່າບໍລິການທີ່ໄດ້ຈ່າຍໄປແລ້ວ;
6. ໃນກໍລະນີທີ່ ຜູ້ຮ້ອງຂໍຈົດທະບຽນຫາກຮຽກເອົາວັນບູລິມະສິດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 29 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ຊຶ່ງມີໄລຍະເວລາຂໍຮັບວັນບູລິມະສິດສໍາລັບເຄື່ອງໝາຍການຄ້າ ແມ່ນ 6 ເດືອນ ນັບແຕ່ວັນທີໄດ້ຮັບວັນບູລິມະສິດເປັນຕົ້ນໄປ, ໃນກໍລະນີ ວັນສຸດທ້າຍຂອງໄລຍະເວລາດັ່ງກ່າວ ຫາກແມ່ນວັນພັກທາງລັດຖະການ ຫຼື ເປັນວັນທີ່ກົມບໍ່ເປີດຮັບຄໍາຮ້ອງກົມຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປຈົນເຖິງວັນລັດຖະການທໍາອິດຖັດໄປ.

**ມາດຕາ 8 ສໍານວນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ສໍານວນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ປະກອບມີເອກະສານ ດັ່ງນີ້:

1. ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບມອບສິດທີ່ເປັນຕົ້ນສະບັບ ໃນກໍລະນີທີ່ຍື່ນຜ່ານຜູ້ຕາງໜ້າ;
3. ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວຢ່າງເຄື່ອງໝາຍທີ່ຈະແຈ້ງ;
4. ບົດອະທິບາຍກ່ຽວກັບສິນຄ້າ ຫຼື ການບໍລິການ ລວມທັງ ລາຍການສິນຄ້າ ຫຼື ການບໍລິການທີ່ຈະນໍາໃຊ້ເຄື່ອງໝາຍດັ່ງກ່າວ. ໃນກໍລະນີຄໍາຮ້ອງຫາກເປັນເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງ ໃຫ້ລະບຸເຄື່ອງໝາຍດັ່ງກ່າວໃສ່ໃນຄໍາຮ້ອງ ພ້ອມທັງມີບົດອະທິບາຍກ່ຽວກັບການນໍາໃຊ້ເຄື່ອງໝາຍນັ້ນ;
5. ໃບຮັບເງິນຄ່າທໍານຽມ ແລະ ຄ່າບໍລິການ.

**ມາດຕາ 9 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄໍາຮ້ອງ**

ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ມີເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄໍາຮ້ອງ ຕ້ອງປະກອບດ້ວຍ ຊື່, ທີ່ຢູ່, ສັນຊາດຂອງຜູ້ຮ້ອງຂໍຈົດທະບຽນ, ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວຢ່າງຂອງເຄື່ອງໝາຍທີ່ຈະແຈ້ງ ພ້ອມດ້ວຍໃບຮັບເງິນຄ່າທໍານຽມ ແລະ ຄ່າບໍລິການ.

ໃນກໍລະນີທີ່ ຄໍາຮ້ອງບໍ່ໄດ້ລະບຸລາຍການສິນຄ້າ ຫຼື ການບໍລິການ ທີ່ຂໍການປົກປ້ອງພາຍໃຕ້ເຄື່ອງໝາຍການຄ້າດັ່ງກ່າວ, ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ລະບຸລາຍການສິນຄ້າ ຫຼື ການບໍລິການ. ໃນກໍລະນີທີ່ ຄໍາຮ້ອງຫາກລະບຸໝວດສິນຄ້າ ຫຼື ການບໍລິການ ຫຼາຍກວ່າໜຶ່ງໝວດ ຕ້ອງຈ່າຍຄ່າທໍານຽມເປັນແຕ່ລະໝວດ.

**ມາດຕາ 10 ເງື່ອນໄຂຂອງຕົວຢ່າງເຄື່ອງໝາຍ**

ຢູ່ໃນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງມີຕົວຢ່າງຂອງເຄື່ອງໝາຍທີ່ຈະແຈ້ງ. ໃນກໍລະນີທີ່ເຄື່ອງໝາຍຫາກເປັນຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຕ້ອງໃຫ້ມີຄວາມລະອຽດ ແລະ ຊັດເຈນ ຊຶ່ງຕົວຢ່າງຂອງເຄື່ອງໝາຍ ຕ້ອງສະແດງພຽງແຕ່ເຄື່ອງໝາຍດຽວເທົ່ານັ້ນ ແລະ ຕ້ອງບໍ່ໃຫ້ມີອົງປະກອບອື່ນ ທີ່ບໍ່ແມ່ນສ່ວນປະກອບຂອງເຄື່ອງໝາຍທີ່ຂໍຈົດທະບຽນ ເຊັ່ນ: ຂໍ້ມູນກ່ຽວກັບສິນຄ້າ, ແຫຼ່ງທີ່ມາຂອງສິນຄ້າ, ເຄື່ອງໝາຍຢັ້ງຢືນ ແລະ ຮັບຮອງ (ອຢ, ມລ, ISO) ແລະ ອື່ນໆ ທີ່ມີຢູ່ໃນສະຫຼາກຂອງສິນຄ້າ.

ໃນກໍລະນີ ຕົວຢ່າງຂອງເຄື່ອງໝາຍ ຫາກບໍ່ມີການອອກແບບລວດລາຍ, ຂະໜາດ ຫຼື ສີສະເພາະຂອງຕົວໜັງສື, ຕົວຢ່າງຂອງເຄື່ອງໝາຍ ຕ້ອງຢູ່ໃນຮູບແບບຕົວໜັງສືທີ່ເປັນມາດຕະຖານ ໂດຍລະບຸຊື່ຂອງຮູບແບບຕົວໜັງສື (Font) ທີ່ນໍາໃຊ້ເປັນເຄື່ອງໝາຍ.

ໃນກໍລະນີ ສີ ຫາກເປັນລັກສະນະຕົ້ນຕໍຂອງເຄື່ອງໝາຍ, ຕ້ອງລະບຸສີຢ່າງຊັດເຈນ ຫຼື ລະບຸລະຫັດຂອງສີ.

ໃນກໍລະນີ ເຄື່ອງໝາຍ ຫາກມີລັກສະນະເປັນສາມມິຕິ, ຕ້ອງສະແດງແຕ່ລະມິຕິ ແລະ ລະບຸວ່າເຄື່ອງໝາຍດັ່ງກ່າວ ເປັນເຄື່ອງໝາຍສາມມິຕິ.

ໃນກໍລະນີ ເຄື່ອງໝາຍ ຫາກເປັນຮູບທີ່ມີການເຄື່ອນເໜັງ ຕ້ອງອະທິບາຍຄວາມໝາຍຂອງເຄື່ອງໝາຍດັ່ງກ່າວ. ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງສະໜອງຕົວຢ່າງຂອງເຄື່ອງໝາຍນັ້ນ ໃນຮູບແບບເຈ້ຍທີ່ສະແດງໃຫ້ເຫັນລາຍລະອຽດຂອງທຸກການເຄື່ອນເໜັງ. ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງລະບຸວ່າ ເຄື່ອງໝາຍດັ່ງກ່າວ ເປັນເຄື່ອງໝາຍເຄື່ອນເໜັງ.

ໃນກໍລະນີ ຕົວຢ່າງຂອງເຄື່ອງໝາຍ ຫາກເປັນຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຮູບສາມມິຕິຕ້ອງເຮັດໃສ່ເຈ້ຍທີ່ມີຄຸນນະພາບ ແລະ ບໍ່ເຫຼື້ອມ ໂດຍສະແດງໃຫ້ເຫັນເຄື່ອງໝາຍຢ່າງຈະແຈ້ງ. ບັນດາເສັ້ນສາຍ ຫຼື ລວດລາຍຕ້ອງມີຄວາມຈະແຈ້ງ, ເຂັ້ມ ແລະ ມີຂະໜາດລະຫວ່າງ 4X4 ຊມ ຫາ 6X6 ຊມ. ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດສະໜອງສໍາເນົາຕົວຢ່າງຂອງເຄື່ອງໝາຍ ໃນຮູບແບບເອເລັກໂຕຣນິກ ກໍ່ໄດ້.

ໃນກໍລະນີ ຮັບເອົາຕົວຢ່າງຂອງເຄື່ອງໝາຍແລ້ວ ເຫັນວ່າຍັງບໍ່ສອດຄ່ອງຕາມເງື່ອນໄຂຂອງມາດຕານີ້, ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ດັດແກ້ ແລ້ວສົ່ງຕົວຢ່າງທີ່ໄດ້ດັດແກ້ນັ້ນຄືນມາໃຫ້ກົມຊັບສິນທາງປັນຍາ ພາຍໃນ 15 ວັນ ນັບແຕ່ວັນອອກແຈ້ງການຂອງກົມເປັນຕົ້ນໄປ.

ທຸກການດັດແກ້ຕົວຢ່າງຂອງເຄື່ອງໝາຍ ຕ້ອງບໍ່ເຮັດໃຫ້ເກີດມີການປ່ຽນແປງລັກສະນະຕົ້ນຕໍຂອງເຄື່ອງໝາຍການຄ້ານັ້ນ.

**ມາດຕາ 11 ລາຍການສິນຄ້າ ຫຼື ການບໍລິການ**

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງລະບຸລາຍການສິນຄ້າ ຫຼື ການບໍລິການທີ່ກ່ຽວຂ້ອງກັບເຄື່ອງໝາຍທີ່ຕົນຂໍນຳໃຊ້ ຫຼື ຈະນຳໃຊ້ຢ່າງບໍລິສຸດໃຈ ແລະ ຈັດປະເພດລາຍການສິນຄ້າ ຫຼື ການບໍລິການ ຕາມການຈັດໝວດທີ່ກ່ຽວຂ້ອງ. ການລະບຸລາຍການສິນຄ້າ ຫຼື ການບໍລິການເຊັ່ນ: ສິນຄ້າທັງໝົດ, ການບໍລິການທັງໝົດ, ສິນຄ້າອື່ນທັງໝົດ ຫຼື ການບໍລິການອື່ນທັງໝົດ, ການລະບຸພຽງແຕ່ເລກລະຫັດໝວດ, ຊື່ໝວດຂອງສິນຄ້າ ຫຼື ການບໍລິການ ແມ່ນບໍ່ສາມາດເຮັດໄດ້.

ການລະບຸສິນຄ້າ ຫຼື ການບໍລິການ ຫຼື ທັງສອງຢ່າງ ຕ້ອງໃຫ້ສອດຄ່ອງຕາມການຈັດໝວດສາກົນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້. ຖ້າຫາກບໍ່ສາມາດລະບຸສິນຄ້າ ຫຼື ການບໍລິການ ຫຼື ທັງສອງຢ່າງໄດ້ ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງສະໜອງຂໍ້ມູນຢ່າງຄົບຖ້ວນ ເພື່ອໃຫ້ກົມຊັບສິນທາງປັນຍາສາມາດລະບຸໝວດສິນຄ້າ ຫຼື ການບໍລິການ ຫຼື ທັງສອງຢ່າງ.

**ມາດຕາ 12 ການຈັດໝວດສາກົນກ່ຽວກັບສິນຄ້າ ແລະ ການບໍລິການ**

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງລະບຸໝວດ ຕາມການຈັດໝວດສາກົນສຳລັບລາຍການສິນຄ້າ ຫຼື ການບໍລິການ.

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍລວມໝູ່ ຕ້ອງລະບຸໝວດ ຕາມການຈັດໝວດສາກົນສຳລັບລາຍການສິນຄ້າ ຫຼື ການບໍລິການ ທີ່ຈະນຳໃຊ້ເຄື່ອງໝາຍລວມໝູ່.

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍຮັບຮອງ ຕ້ອງລະບຸໝວດຕາມການຈັດໝວດສາກົນສຳລັບລາຍການສິນຄ້າ ຫຼື ການບໍລິການ ທີ່ຈະຮັບຮອງ.

ເນື່ອງຈາກວ່າ ການຈັດໝວດສາກົນ ມີການປ່ຽນແປງເປັນແຕ່ລະໄລຍະ, ດັ່ງນັ້ນ ຄຳຮ້ອງຕ້ອງລະບຸການຈັດໝວດສິນຄ້າ ຫຼື ການບໍລິການ ຕາມການຈັດໝວດສາກົນທີ່ກຳລັງນຳໃຊ້ໃນເວລາຍື່ນຄຳຮ້ອງ.

ໃນກໍລະນີ ການຈັດໝວດສາກົນ ຫາກມີການປ່ຽນແປງໃນລະຫວ່າງການດຳເນີນການພິຈາລະນາຄຳຮ້ອງ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ດັດແກ້ຄຳຮ້ອງ ເພື່ອລະບຸໝວດທີ່ຖືກຕ້ອງ. ຖ້າການປ່ຽນແປງການຈັດໝວດຂອງສາກົນຫາກເປັນສາເຫດເຮັດໃຫ້ຄຳຮ້ອງມີໝວດເພີ່ມຂຶ້ນ ຕ້ອງບໍ່ໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຈ່າຍຄ່າທຳນຽມສຳລັບໝວດທີ່ເພີ່ມຂຶ້ນ, ແຕ່ຕ້ອງຈ່າຍຄ່າທຳນຽມສຳລັບແຕ່ລະໝວດສິນຄ້າ ຫຼື ບໍລິການນັ້ນໃນເວລາມາຕໍ່ອາຍຸການປົກປ້ອງເຄື່ອງໝາຍດັ່ງກ່າວ.

ການຈົດທະບຽນເຄື່ອງໝາຍການຄ້າ ຈະປົກປ້ອງພຽງແຕ່ລາຍການສິນຄ້າ ຫຼື ການບໍລິການ ທີ່ລະບຸຢູ່ໃນໝວດຂອງຄຳຮ້ອງທີ່ຍື່ນມາເທົ່ານັ້ນ, ແຕ່ບໍ່ກວມເອົາລາຍການສິນຄ້າ ຫຼື ການບໍລິການ ອື່ນຢູ່ໃນໝວດດຽວກັນທີ່ບໍ່ຖືກລະບຸໃສ່ໃນຄຳຮ້ອງ. ສຳລັບເຄື່ອງໝາຍການຄ້າທີ່ຈົດທະບຽນກ່ອນໜ້າການອອກຂໍ້ຕົກລົງສະບັບນີ້ ໂດຍມີການລະບຸ "ໝວດ ສິນຄ້າ ຫຼື ການບໍລິການ ທັງໝົດ" ໃສ່ໃນໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ແມ່ນຍັງມີຜົນສັກສິດຈົນກວ່າຈະໝົດອາຍຸ. ແຕ່ວ່າ ໃນເວລາມາຕໍ່ອາຍຸການຈົດທະບຽນເຄື່ອງໝາຍການຄ້າ ໃຫ້ລະບຸລາຍການສິນຄ້າ ຫຼື ການບໍລິການ ຢູ່ໃນໝວດດັ່ງກ່າວ, ຖ້າບໍ່ດັ່ງນັ້ນ ກົມຊັບສິນທາງປັນຍາ ຈະປະຕິເສດການຕໍ່ອາຍຸການຈົດທະບຽນເຄື່ອງໝາຍການຄ້ານັ້ນ.

**ມາດຕາ 13 ຫຼັກການພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ການພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງປະຕິບັດຕາມຫຼັກການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 28 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ. ໃນກໍລະນີ ມີການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຫຼາຍສະບັບ ພາຍໃນໄລຍະດຽວກັນ ທີ່ເປັນເຄື່ອງໝາຍດຽວກັນ ຫຼື ຄ້າຍຄືກັນ ຊຶ່ງສຳລັບສິນຄ້າດຽວກັນ ຫຼື ຄ້າຍຄືກັນນັ້ນ ໃຫ້ພິຈາລະນາຄຳຮ້ອງທີ່ມີບຸລິມະສິດກ່ອນ. ໃນກໍລະນີທີ່ ກົມຊັບສິນ

ທາງປັນຍາ ໄດ້ດຳເນີນຕາມຂັ້ນຕອນການພິຈາລະນາຄຳຮ້ອງແລ້ວ ໃຫ້ຈົດທະບຽນຄຳຮ້ອງທີ່ໄດ້ຮັບບູລິມະສິດກ່ອນ, ພ້ອມທັງອອກໜັງສືແຈ້ງປະຕິເສດຄຳຮ້ອງທີ່ໄດ້ຮັບບູລິມະສິດຕາມຫຼັງ. ໃນກໍລະນີທີ່ ການພິຈາລະນາຄຳຮ້ອງທີ່ໄດ້ຮັບບູລິມະສິດຕາມຫຼັງນັ້ນ ຫາກສຳເລັດກ່ອນ ແລະ ຄຳຮ້ອງດັ່ງກ່າວ ມີເງື່ອນໄຂໃນການໄດ້ຮັບການຈົດທະບຽນ, ກົມຊັບສິນທາງປັນຍາຕ້ອງໂຈະການພິຈາລະນາຄຳຮ້ອງດັ່ງກ່າວນັ້ນໄວ້ກ່ອນ ຈົນກວ່າການພິຈາລະນາຄຳຮ້ອງທີ່ໄດ້ຮັບບູລິມະສິດກ່ອນນັ້ນຈະສິ້ນສຸດລົງ.

ໃນກໍລະນີທີ່ ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫາກມີເຄື່ອງໝາຍຄືກັນ ຫຼື ຄ້າຍຄືກັນກັບເຄື່ອງໝາຍທີ່ມີຊື່ສຽງ ຫຼື ຖິ່ນກຳເນີດ ຄຳຮ້ອງດັ່ງກ່າວມີສິດໄດ້ຮັບການພິຈາລະນາ ແຕ່ຕ້ອງມີບູລິມະສິດມາກ່ອນເຄື່ອງໝາຍທີ່ມີຊື່ສຽງ ຫຼື ຖິ່ນກຳເນີດ ທີ່ໄດ້ຮັບການຈົດທະບຽນຢູ່ ສປປ ລາວ ຫຼື ປະເທດໃດໜຶ່ງແລ້ວ. ກົມຊັບສິນທາງປັນຍາ ຈະບໍ່ໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ ບໍ່ໃຫ້ຄຳແນະນຳກ່ຽວກັບຄວາມເປັນໄປໄດ້ວ່າເຄື່ອງໝາຍການຄ້ານັ້ນສອດຄ່ອງຕາມ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້ ແຕ່ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດຍື່ນຄຳຮ້ອງຂໍຄົ້ນຫາເຄື່ອງໝາຍການຄ້າຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ເພື່ອໃຫ້ຮູ້ວ່າເຄື່ອງໝາຍການຄ້າທີ່ຂໍຄົ້ນຫານັ້ນ ໄດ້ຈົດທະບຽນແລ້ວ ຫຼື ບໍ່ ໂດຍຕ້ອງລະບຸໝວດຂອງສິນຄ້າ ຫຼື ການບໍລິການທີ່ຕ້ອງການຄົ້ນຫາ ພ້ອມທັງຈ່າຍຄ່າບໍລິການ.

ໃນກໍລະນີ ເຄື່ອງໝາຍການຄ້າທີ່ຂໍຄົ້ນຫານັ້ນ ຫາກເປັນພາສາຕ່າງປະເທດ ທີ່ບໍ່ແມ່ນພາສາອັງກິດຕ້ອງມີຄຳອະທິບາຍ ແລະ ວິທີອ່ານອອກສຽງເປັນພາສາລາວ ຫຼື ພາສາອັງກິດ ມາພ້ອມ.

ຜົນຂອງການຄົ້ນຫາເຄື່ອງໝາຍການຄ້າ ເປັນພຽງແຕ່ການກວດຄົ້ນຫາຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ເບື້ອງຕົ້ນເທົ່ານັ້ນ.

**ມາດຕາ 14 ການກວດສອບເບື້ອງຕົ້ນ**

ພາຍຫຼັງທີ່ກົມຊັບສິນທາງປັນຍາໄດ້ໃຫ້ເລກທີຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າແລ້ວກົມຕ້ອງດຳເນີນການກວດສອບເບື້ອງຕົ້ນກ່ຽວກັບຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ຄວາມສອດຄ່ອງຂອງສຳນວນຄຳຮ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 33 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 5, 7, 9, 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້. ການກວດສອບເບື້ອງຕົ້ນຕ້ອງດຳເນີນການພາຍໃນ 60 ວັນ ນັບແຕ່ວັນຮັບຄຳຮ້ອງເປັນຕົ້ນໄປ.

ສຳລັບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ຍັງຕ້ອງໄດ້ກວດສອບຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ສອດຄ່ອງ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ 3 ຫຼື 4, ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີທີ່ ສຳນວນຄຳຮ້ອງຫາກບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້, ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສະໜອງເອກະສານ ຫຼື ດັດແກ້ໃຫ້ໄດ້ຕາມເງື່ອນໄຂດັ່ງກ່າວພາຍໃນ 60 ວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫາກບໍ່ສາມາດປະຕິບັດພາຍໃນກຳນົດເວລາດັ່ງກ່າວ ກົມຊັບສິນທາງປັນຍາຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ກ່ຽວຊາບວ່າ ຄຳຮ້ອງດັ່ງກ່າວຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ.

ໃນກໍລະນີ ສຳນວນຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນ ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄຳຮ້ອງດັ່ງກ່າວລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

### ມາດຕາ 15 ການແຍກຄຳຮ້ອງ

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໃດໜຶ່ງ ສາມາດແຍກອອກເປັນສອງສະບັບ ຫຼື ຫຼາຍສະບັບ ໄດ້ທຸກເວລາ ແຕ່ຕ້ອງດຳເນີນກ່ອນໜ້າການອອກໃບຢັ້ງຢືນການຈົດທະບຽນ, ການປະຕິເສດ, ການຍົກເລີກ. ການຍື່ນຄຳຮ້ອງຂໍຈົດທະບຽນທີ່ຖືກແຍກອອກມານັ້ນ ຕ້ອງອ້າງອີງໃສ່ຄຳຮ້ອງສະບັບເດີມ ທີ່ຍື່ນໃນເບື້ອງຕົ້ນ ແລະ ອະທິບາຍວ່າ ຄຳຮ້ອງທີ່ຍື່ນມາໃໝ່ນັ້ນ ໄດ້ແຍກອອກມາຈາກຄຳຮ້ອງສະບັບເດີມ ໂດຍລະບຸເລກທີ ແລະ ວັນທີຍື່ນຄຳຮ້ອງສະບັບເດີມ ໃສ່ຄຳຮ້ອງທີ່ຍື່ນມາໃໝ່ແຕ່ລະສະບັບ. ສຳລັບຄຳຮ້ອງສະບັບເດີມນັ້ນຕ້ອງມີການ ດັດແກ້ ໂດຍຮັກສາໄວ້ພຽງແຕ່ລາຍການ ຫຼື ໝວດສິນຄ້າ ຫຼື ໝວດການບໍລິການທີ່ຍັງເຫຼືອ. ຄຳຮ້ອງທີ່ແຍກ ອອກມານັ້ນ ຕ້ອງຍື່ນພ້ອມກັບຄຳຮ້ອງສະບັບເດີມທີ່ຖືກດັດແກ້ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກ ລົງສະບັບນີ້.

ຄຳຮ້ອງທີ່ຖືກແຍກອອກມາແຕ່ລະສະບັບ ມີສິດໄດ້ຮັບວັນທີຍື່ນຄຳຮ້ອງຕາມຄຳຮ້ອງສະບັບເດີມ ຊຶ່ງຄຳ ຮ້ອງທີ່ຖືກແຍກອອກມາແຕ່ລະສະບັບ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ.

### ມາດຕາ 16 ການເຜີຍແຜ່ຄຳຮ້ອງ

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າລົງໃນຈົດໝາຍເຫດທາງ ລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳເປັນເວລາ 15 ວັນ ພາຍຫຼັງສຳເລັດການກວດສອບ ເບື້ອງຕົ້ນສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຊຶ່ງການເຜີຍແຜ່ ຕ້ອງປະກອບມີຂໍ້ມູນ ດັ່ງລຸ່ມນີ້:

1. ເຄື່ອງໝາຍການຄ້າ;
2. ໝວດຂອງສິນຄ້າ ແລະ/ຫຼື ການບໍລິການ;
3. ເລກທີ ແລະ ວັນທີຍື່ນຄຳຮ້ອງ;
4. ຊື່ ແລະ ທີ່ຢູ່ຂອງຜູ້ຍື່ນຄຳຮ້ອງ;
5. ຂໍ້ຈຳກັດໃນການຂໍປົກປ້ອງ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄຳຮ້ອງດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 39 ຂອງກົດ ໝາຍວ່າດ້ວຍຊັບສິນທາງປັນຍາ ພາຍໃນ 60 ວັນ ນັບແຕ່ວັນທີໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະ ການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ໂດຍປະກອບຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ສຳນວນຄຳຮ້ອງຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງປະກອບມີເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;
2. ເອກະສານ ແລະ ຫຼັກຖານຊີ້ແຈງກ່ຽວກັບການຄັດຄ້ານ;
3. ໃບຮັບເງິນຄ່າບໍລິການ.

### ມາດຕາ 17 ການພິຈາລະນາການຄັດຄ້ານຄຳຮ້ອງ

ການພິຈາລະນາການຄັດຄ້ານຄຳຮ້ອງ ຕ້ອງດຳເນີນ ດັ່ງນີ້:

1. ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ຖືກຄັດຄ້ານນັ້ນ ຊາບຢ່າງທັນການ ພາຍຫຼັງໄດ້ຮັບຄຳຮ້ອງຂໍຄັດຄ້ານ;
2. ຜູ້ຮ້ອງຂໍຈົດທະບຽນ ຕ້ອງຍື່ນຄຳຊີ້ແຈງ ພ້ອມດ້ວຍຂໍ້ມູນຫຼັກຖານກ່ຽວກັບເຄື່ອງໝາຍຂອງຕົນ ເຖິງກົມຊັບສິນທາງປັນຍາ ພາຍໃນ 60 ວັນ ນັບແຕ່ວັນອອກແຈ້ງການຂອງກົມ ກ່ຽວກັບການ ຄັດຄ້ານດັ່ງກ່າວ;
3. ກົມຊັບສິນທາງປັນຍາ ຕ້ອງສົ່ງສຳເນົາຄຳຊີ້ແຈງນັ້ນໃຫ້ຜູ້ຂໍຄັດຄ້ານຊາບ;

4. ກົມຊັບສິນທາງປັນຍາ ຕ້ອງພິຈາລະນາຄຳຊີ້ແຈງ ແລະ ຂໍ້ມູນຫຼັກຖານດັ່ງກ່າວ;
5. ໃນກໍລະນີ ຂໍ້ມູນຫຼັກຖານຂອງຜູ້ຂໍຄັດຄ້ານ ແລະ/ຫຼື ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຫາກບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ ກົມຊັບສິນທາງປັນຍາ ຈະອອກໜັງສືເຊີນໃຫ້ຄູ່ກໍລະນີມາຊີ້ແຈງ ຫຼື ສະແດງຫຼັກຖານ ຫຼື ສະໜອງຂໍ້ມູນເພີ່ມເຕີມ;
6. ຖ້າຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ຜູ້ຂໍຄັດຄ້ານຫາກບໍ່ປະຕິບັດຕາມໜັງສືເຊີນ ຂອງກົມຊັບສິນທາງປັນຍາ ພາຍໃນ 60 ວັນ ນັບແຕ່ວັນອອກໜັງສືເຊີນ ຂອງກົມຊັບສິນທາງປັນຍາ ຈະພິຈາລະນາການຄັດຄ້ານຕາມຫຼັກຖານທີ່ມີ;
7. ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການພິຈາລະນາ ພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ແລະ ຜູ້ຂໍຄັດຄ້ານຊາບ;
8. ກົມຊັບສິນທາງປັນຍາ ຕ້ອງປະຕິເສດຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫາກກົມຊັບສິນທາງປັນຍາ ພິຈາລະນາແລ້ວ ເຫັນວ່າການຄັດຄ້ານມີເຫດຜົນ ແລະ ມີຫຼັກຖານພຽງພໍ;
9. ກົມຊັບສິນທາງປັນຍາ ຕ້ອງສືບຕໍ່ພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໃນກໍລະນີກົມຊັບສິນທາງປັນຍາ ຫາກພິຈາລະນາເຫັນວ່າ ການຄັດຄ້ານ ບໍ່ມີເຫດຜົນ ແລະ ບໍ່ມີຫຼັກຖານພຽງພໍ;
10. ຖ້າຄູ່ກໍລະນີຫາກບໍ່ພໍໃຈຕໍ່ຜົນການພິຈາລະນາດັ່ງກ່າວ ແມ່ນສາມາດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໄປຍັງຄະນະກຳມະການພິຈາລະນາຂັ້ນສຸດທ້າຍຂອງກົມຊັບສິນທາງປັນຍາ ພາຍໃນ 60 ວັນ ນັບແຕ່ວັນອອກແຈ້ງການຂອງກົມເປັນຕົ້ນໄປ.

**ມາດຕາ 18 ການກວດສອບເນື້ອໃນ**

ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດສອບເນື້ອໃນ ໂດຍອີງຕາມຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ສາກົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 40 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ເພື່ອພິຈາລະນາຄຳຮ້ອງນັ້ນ ໃຫ້ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ແລະ 23 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຈະປະຕິເສດຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໃນກໍລະນີທີ່ສຳນວນຄຳຮ້ອງດັ່ງກ່າວບໍ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນ ແລະ ຕ້ອງແຈ້ງເຫດຜົນໃນການປະຕິເສດເບື້ອງຕົ້ນໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ເພື່ອຮັບຊາບ.

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ມີໜ້າທີ່ສະໜອງຂໍ້ມູນ ແລະ ເອກະສານ ຫຼື ຄຳຊີ້ແຈງ ພາຍຫຼັງທີ່ໄດ້ຮັບແຈ້ງການປະຕິເສດເບື້ອງຕົ້ນຕໍ່ກົມຊັບສິນທາງປັນຍາ ພາຍໃນ 60 ວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ກົມຊັບສິນທາງປັນຍາ ສາມາດຮຽກເອົາຂໍ້ມູນເພີ່ມເຕີມຈາກຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໃນກໍລະນີຈຳເປັນ. ຖ້າຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫາກບໍ່ປະຕິບັດຕາມກຳນົດເວລາໃນແຈ້ງການຄຳຮ້ອງດັ່ງກ່າວ ຈະບໍ່ຖືກພິຈາລະນາ ແລະ ຖືວ່າຖືກສະຫຼະສິດ.

ກົມຊັບສິນທາງປັນຍາ ສາມາດຕໍ່ເວລາໃຫ້ຕື່ມອີກ 30 ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທຳອິດເປັນຕົ້ນໄປ ຖ້າມີເຫດຜົນພຽງພໍ.

ກົມຊັບສິນທາງປັນຍາ ຕ້ອງປະຕິເສດຂັ້ນສຸດທ້າຍຕໍ່ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ດັ່ງກ່າວ ແລະ ແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຊາບ ເມື່ອເຫັນວ່າ ການສະໜອງຂໍ້ມູນ, ເອກະສານ ຫຼື ຄຳຊີ້ແຈງ ບໍ່ສອດຄ່ອງກັບເງື່ອນໄຂຂອງການຈົດທະບຽນ.

**ມາດຕາ 19 ການບໍ່ອະນຸຍາດໃຫ້ຖືສິດແຕ່ພຽງຜູ້ດຽວ**

ໃນກໍລະນີ ເຄື່ອງໝາຍທີ່ຂໍການປົກປ້ອງ ຫາກປະກອບດ້ວຍຄໍາສັບທີ່ເປັນຄໍາອະທິບາຍ ຫຼື ຄໍາເວົ້າທົ່ວໄປ ເປັນຕົ້ນການຊີ້ບອກ ຄຸນນະພາບ, ຄຸນລັກສະນະຂອງສິນຄ້າ ຫຼື ການບໍລິການ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຊາບວ່າ ຄໍາສັບດັ່ງກ່າວບໍ່ສາມາດຮຽກຮ້ອງສິດໄດ້ ເພື່ອບໍ່ເປັນການກີດກັ້ນຜູ້ຜະລິດອື່ນ ຫຼື ຜູ້ສະໜອງອື່ນທີ່ນໍາໃຊ້ຄໍາສັບດຽວກັນນັ້ນສໍາລັບສິນຄ້າ ຫຼື ການບໍລິການ ທີ່ຊີ້ບອກຄຸນນະພາບ ຫຼື ຄຸນລັກສະນະດຽວກັນ.

ໃນກໍລະນີ ເຄື່ອງໝາຍດັ່ງກ່າວ ຫາກເປັນຄໍາອະທິບາຍ ຫຼື ເປັນຄໍາເວົ້າທົ່ວໄປ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຊີ້ແຈງວ່າ ຄໍາສັບດັ່ງກ່າວເປັນສ່ວນໜຶ່ງຂອງເຄື່ອງໝາຍ ຫຼື ບໍ່. ຖ້າຫາກວ່າຄໍາສັບນັ້ນເປັນສ່ວນໜຶ່ງຂອງເຄື່ອງໝາຍ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ດັດແກ້ເຄື່ອງໝາຍໂດຍລຶບຄໍາສັບດັ່ງກ່າວນັ້ນອອກ.

**ມາດຕາ 20 ການດັດແກ້ປະເພດເຄື່ອງໝາຍ**

ອີງຕາມ ມາດຕາ 42 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້, ເຄື່ອງໝາຍປະເພດໃດໜຶ່ງ ທີ່ໄດ້ລະບຸໄວ້ໃນຄໍາຮ້ອງຂໍຈົດທະບຽນ ທີ່ໄດ້ຍື່ນໃນເບື້ອງຕົ້ນສາມາດດັດແກ້ມາເປັນ ເຄື່ອງໝາຍການຄ້າ, ເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງ ກໍໄດ້.

ໃນກໍລະນີ ເຄື່ອງໝາຍດັ່ງກ່າວ ຫາກຖືກດັດແກ້ມາເປັນເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງ ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງຍື່ນຄໍາຮ້ອງຂໍຈົດທະບຽນຄືນໃໝ່ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ.

**ມາດຕາ 21 ການດັດແກ້ຄໍາຮ້ອງ**

ໃນໄລຍະການກວດສອບ ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດດັດແກ້ຄໍາຮ້ອງໄດ້ທຸກເວລາ ແຕ່ຕ້ອງດໍາເນີນກ່ອນໜ້າການຈົດທະບຽນ, ການສະຫຼະສິດ, ການປະຕິເສດຂັ້ນສຸດທ້າຍ ຫຼື ການສິ້ນສຸດການພິຈາລະນາອື່ນຂອງຄໍາຮ້ອງດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 42 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ, ຊຶ່ງການດັດແກ້ຄໍາຮ້ອງນັ້ນ ຕ້ອງບໍ່ໃຫ້ເພີ່ມລາຍການ, ໝວດສິນຄ້າ, ການບໍລິການ ຫຼື ປ່ຽນແປງລັກສະນະຕົ້ນຕໍຂອງເຄື່ອງໝາຍຢູ່ໃນສໍານວນຄໍາຮ້ອງດັ່ງກ່າວ.

**ມາດຕາ 22 ການເພີ່ມໝວດສິນຄ້າ ຫຼື ການບໍລິການ**

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດຂໍເພີ່ມໝວດສິນຄ້າ ຫຼື ການບໍລິການ ແຕ່ຕ້ອງຈ່າຍຄ່າທໍານຽມເປັນແຕ່ລະໝວດສິນຄ້າ ຫຼື ການບໍລິການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ກ່ອນການຈົດທະບຽນເຄື່ອງໝາຍການຄ້າ ຊຶ່ງຢູ່ໃນໄລຍະກວດສອບຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;
2. ພາຍຫຼັງການຈົດທະບຽນເຄື່ອງໝາຍການຄ້າ.

ການຂໍເພີ່ມໝວດສິນຄ້າ ຫຼື ການບໍລິການ ຕ້ອງຍື່ນໃບສະເໜີຂໍເພີ່ມໝວດ ຕາມແບບພິມຂອງກົມໂດຍລະບຸໝວດ ແລະ ລາຍການສິນຄ້າ ຫຼື ການບໍລິການ ທີ່ຕ້ອງການເພີ່ມເຕີມນັ້ນ.

ສໍາລັບການຂໍເພີ່ມໝວດສິນຄ້າ ຫຼື ການບໍລິການ ພາຍຫຼັງການຈົດທະບຽນເຄື່ອງໝາຍການຄ້າ ແລ້ວຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງໄດ້ຍື່ນຄໍາຮ້ອງຄືນໃໝ່ ຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ.

**ມາດຕາ 23 ການຈົດທະບຽນເຄື່ອງໝາຍການຄ້າ**

ກົມຊັບສິນທາງປັນຍາ ຕ້ອງຈົດທະບຽນເຄື່ອງໝາຍການຄ້າ, ບັນທຶກຂໍ້ມູນທີ່ກ່ຽວຂ້ອງ ລົງໃນປຶ້ມບັນທຶກການຈົດທະບຽນ ແລະ ຖານຂໍ້ມູນຂອງກົມຊັບສິນທາງປັນຍາ ໃນເມື່ອສຳນວນຄຳຮ້ອງສອດຄ່ອງຕາມເງື່ອນໄຂການຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້. ຄຳຮ້ອງຫາກຜ່ານຂະບວນການຄັດຄ້ານ ຫຼື ການພິຈາລະນາຂັ້ນສຸດທ້າຍແລ້ວ ແຕ່ການຄັດຄ້ານ ຫຼື ການການພິຈາລະນາຂັ້ນສຸດທ້າຍນັ້ນບໍ່ເປັນຜົນ.

**ມາດຕາ 24 ການເຜີຍແຜ່ຜົນຂອງການຈົດທະບຽນເຄື່ອງໝາຍການຄ້າ**

ພາຍຫຼັງການຈົດທະບຽນເຄື່ອງໝາຍການຄ້າແລ້ວ ກົມຕ້ອງເຜີຍແຜ່ຜົນຂອງການຈົດທະບຽນດັ່ງກ່າວລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດສະເໜີໃຫ້ກົມເຜີຍແຜ່ຜົນຂອງການຈົດທະບຽນຄືນໃໝ່ ພ້ອມດ້ວຍຂໍ້ມູນທີ່ຖືກດັດແກ້ ໂດຍບໍ່ຕ້ອງຈ່າຍຄ່າບໍລິການ ໃນກໍລະນີທີ່ ການເຜີຍແຜ່ຫາກມີຂໍ້ຜິດພາດ ແລະ ຕ້ອງຍື່ນພາຍໃນ 60 ວັນນັບແຕ່ວັນເຜີຍແຜ່ຄັ້ງທຳອິດ.

## ໝວດທີ 3
## ການດຳເນີນການ ຫຼັງການຈົດທະບຽນເຄື່ອງໝາຍການຄ້າ

**ມາດຕາ 25 ການປ່ຽນແປງຂໍ້ມູນ ຫຼັງການຈົດທະບຽນເຄື່ອງໝາຍການຄ້າ**

ເຈົ້າຂອງເຄື່ອງໝາຍການຄ້າ ສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ເພື່ອປ່ຽນແປງຂໍ້ມູນກ່ຽວກັບ ຊື່, ທີ່ຢູ່ ຫຼື ຊື່ ແລະ ທີ່ຢູ່ ຂອງເຈົ້າຂອງເຄື່ອງໝາຍການຄ້າ ຕາມແບບພິມຂອງກົມຊັບສິນທາງປັນຍາພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນ, ບັນທຶກການຈົດທະບຽນ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

**ມາດຕາ 26 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ**

ເຈົ້າຂອງເຄື່ອງໝາຍການຄ້າ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ໄດ້ເພື່ອນຳໃຊ້ເປັນຫຼັກຖານໃນການດຳເນີນຄະດີຢູ່ສານປະຊາຊົນ, ການຈົດທະບຽນເຄື່ອງໝາຍການຄ້າຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນ ຫຼື ການຕໍ່ອາຍຸທີ່ເສຍຫາຍ ຫຼື ເສຍ ຊຶ່ງເຈົ້າຂອງເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນຢູ່ນຳກົມຊັບສິນທາງປັນຍາ ຕ້ອງຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 27 ການດັດແກ້ພາຍຫຼັງການຈົດທະບຽນເຄື່ອງໝາຍການຄ້າ**

ພາຍຫຼັງເຄື່ອງໝາຍການຄ້າ ໄດ້ຮັບການຈົດທະບຽນແລ້ວ ເຈົ້າຂອງເຄື່ອງໝາຍການຄ້າ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນຢູ່ໃນເອກະສານ ກ່ຽວກັບການຈົດທະບຽນສຳລັບບາງລາຍການສິນຄ້າ ຫຼື ການບໍລິການ ທີ່ໄດ້ຈົດທະບຽນ, ຂໍສະຫຼະສິດຕໍ່ບາງອົງປະກອບຂອງເຄື່ອງໝາຍການຄ້າ, ຂໍດັດແກ້ບາງຂໍ້ຜິດພາດໃນສຳນວນຄຳຮ້ອງຂໍຈົດທະບຽນ ຫຼື ດັດແກ້ຕົວຢ່າງຂອງເຄື່ອງໝາຍການຄ້າ ໂດຍຍື່ນຄຳຮ້ອງຕາມແບບພິມ

ຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ, ຊຶ່ງການດັດແກ້ດັ່ງກ່າວ ກົມຊັບສິນທາງປັນຍາອະນຸຍາດໃຫ້ດັດແກ້ໄດ້ພຽງໜ່ອຍໜຶ່ງ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນກ່ຽວກັບການດັດແກ້ດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

**ມາດຕາ 28 ການຍົກເລີກ ຫຼື ລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າ**

ບຸກຄົນທີສາມ ມີສິດຍື່ນຄຳຮ້ອງຂໍຍົກເລີກ ຫຼື ລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າ ພາຍໃນ 5 ປີ ນັບແຕ່ວັນເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ. ການຍື່ນຄຳຮ້ອງຂໍຍົກເລີກ ຫຼື ລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າ ໃຫ້ປະຕິບັດຕາມແບບພິມຂອງກົມຊັບສິນທາງປັນຍາພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ມີສິດຍົກເລີກ ຫຼື ລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າດັ່ງກ່າວ ໃນກໍລະນີ ເຈົ້າຂອງເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນແລ້ວ ຫາກບໍ່ປະຕິບັດຕາມພັນທະທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງເຄື່ອງໝາຍການຄ້າຊາບ ໃນເມື່ອໄດ້ຮັບຄຳຮ້ອງຂໍຍົກເລີກຈາກບຸກຄົນທີສາມ.

ເຈົ້າຂອງເຄື່ອງໝາຍການຄ້າ ສາມາດຍື່ນຄຳຊີ້ແຈງເຖິງກົມຊັບສິນທາງປັນຍາພາຍໃນເວລາ 60 ວັນ ນັບແຕ່ວັນທີອອກແຈ້ງການຂອງກົມເປັນຕົ້ນໄປ.

ກົມຊັບສິນທາງປັນຍາ ຕ້ອງອອກໜັງສືຍົກເລີກ ຫຼື ລຶບລ້າງເຄື່ອງໝາຍການຄ້າ ແລະ ແຈ້ງໃຫ້ເຈົ້າຂອງເຄື່ອງໝາຍການຄ້າຊາບ ໃນກໍລະນີທີ່ ເຈົ້າຂອງເຄື່ອງໝາຍການຄ້າ ຫາກບໍ່ມີຄຳຊີ້ແຈງໃດໆ ໃຫ້ຖືວ່າເຈົ້າຂອງເຄື່ອງໝາຍການຄ້າ ນັ້ນຍິນຍອມຕໍ່ການຍົກເລີກ ຫຼື ລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າຂອງຕົນ.

ກົມຊັບສິນທາງປັນຍາ ຕ້ອງຍົກເລີກ ຫຼື ລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າ ໃນກໍລະນີທີ່ບຸກຄົນທີສາມ ຫາກມີການຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີການຍົກເລີກ ຫຼື ລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 139 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການຍົກເລີກໃບຢັ້ງຢືນການຈົດທະບຽນ ໃຫ້ເຈົ້າຂອງເຄື່ອງໝາຍການຄ້າ ແລະ ບຸກຄົນທີ່ຮ້ອງຂໍຍົກເລີກເພື່ອຊາບ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກລົງໃນຖານຂໍ້ມູນ ແລະ ເຜີຍແຜ່ການຍົກເລີກດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

**ມາດຕາ 29 ອາຍຸການປົກປ້ອງ**

ເຄື່ອງໝາຍການຄ້າ ມີອາຍຸການປົກປ້ອງ 10 ປີ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ.

ສຳລັບເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນ ຫຼື ໄດ້ຍື່ນຄຳຮ້ອງຂໍຈົດທະບຽນກ່ອນທີ່ກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017 ມີຜົນບັງຄັບໃຊ້ນັ້ນ ອາຍຸການປົກປ້ອງ ແມ່ນໃຫ້ນັບແຕ່ວັນຈົດທະບຽນ ເປັນຕົ້ນໄປ.

**ມາດຕາ 30 ການຕໍ່ອາຍຸການປົກປ້ອງ**

ເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນແລ້ວ ໃນເມື່ອໝົດອາຍຸການປົກປ້ອງ ແມ່ນສາມາດຕໍ່ອາຍຸໄດ້ເທື່ອລະ 10 ປີ ໂດຍຍື່ນຄຳຮ້ອງຂໍຕໍ່ອາຍຸການປົກປ້ອງ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າ

ທຳນຽມ ແລະ ຄ່າບໍລິການ ຊຶ່ງການຍື່ນຄຳຮ້ອງຂໍຕໍ່ອາຍຸດັ່ງກ່າວ ຕ້ອງຍື່ນພາຍໃນ 6 ເດືອນ ກ່ອນວັນສິ້ນສຸດອາຍຸການປົກປ້ອງ.

ໃນກໍລະນີການປົກປ້ອງເຄື່ອງໝາຍການຄ້າ ຫາກໝົດອາຍຸແຕ່ຍັງບໍ່ທັນໄດ້ຍື່ນຄຳຮ້ອງຂໍຕໍ່ອາຍຸ ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດຍື່ນຄຳຮ້ອງຂໍຕໍ່ອາຍຸການຈົດທະບຽນໄດ້ແຕ່ຕ້ອງຍື່ນ ພາຍໃນ 6 ເດືອນ ນັບແຕ່ວັນສິ້ນສຸດອາຍຸການປົກປ້ອງດັ່ງກ່າວ ພ້ອມທັງຈ່າຍຄ່າບໍລິການໃນການຕໍ່ອາຍຸຊັກຊ້າ.

ໃນກໍລະນີ ທີ່ມື້ສຸດທ້າຍຂອງອາຍຸການປົກປ້ອງເຄື່ອງໝາຍການຄ້າ ຫາກແມ່ນວັນພັກທາງລັດຖະການ ຫຼື ເປັນວັນທີ່ກົມບໍ່ເປີດຮັບຄຳຮ້ອງ, ກົມຕ້ອງຕໍ່ໄລຍະເວລາດັ່ງກ່າວ ອອກໄປຈົນເຖິງວັນລັດຖະການທຳອິດຖັດໄປ.

**ມາດຕາ 31 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ**

ເຈົ້າຂອງເຄື່ອງໝາຍການຄ້າ, ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ສາມາດໂອນສິດຂອງຕົນ ບາງສ່ວນ ຫຼື ທັງໝົດ ດ້ວຍການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ໃນກໍລະນີ ທີ່ມີການໂອນສິດຕໍ່ເຄື່ອງໝາຍການຄ້າ, ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ທີ່ໄດ້ຮັບການຈົດທະບຽນ, ຜູ້ໂອນສິດຫຼືຜູ້ຮັບໂອນສິດຕ້ອງແຈ້ງ ກ່ຽວກັບການໂອນສິດດັ່ງກ່າວ ໃຫ້ກົມຊັບສິນທາງປັນຍາຊາບ ຕາມແບບພິມຂອງກົມພ້ອມທັງຈ່າຍຄ່າບໍລິການ. ກົມຕ້ອງບັນທຶກການໂອນສິດດັ່ງກ່າວເຂົ້າໃນຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ, ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ແລະ ອອກໃບຢັ້ງຢືນການໂອນສິດດັ່ງກ່າວ ໃຫ້ແກ່ຜູ້ຮັບໂອນສິດ.ຖ້າຜູ້ທີ່ໄດ້ຮັບໂອນສິດຫາກເປັນຜູ້ແຈ້ງການໂອນສິດ, ຜູ້ກ່ຽວຕ້ອງສົ່ງສຳເນົາເອກະສານດັ່ງກ່າວ ໃຫ້ຜູ້ໂອນສິດ.

ໃນກໍລະນີ ທີ່ມີການໂອນກຳມະສິດ ຂອງນິຕິບຸກຄົນທີ່ກ່ຽວຂ້ອງກັບເຄື່ອງໝາຍການຄ້າ ຫຼືເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ຕ້ອງປະຕິບັດຕາມທີ່ກຳນົດໄວ້ໃນເອກະສານການໂອນສິດດັ່ງກ່າວ. ໃນກໍລະນີທີ່ບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ, ການໂອນກຳມະສິດ ຂອງນິຕິບຸກຄົນໃຫ້ຖືວ່າລວມເອົາການໂອນເຄື່ອງໝາຍການຄ້າ ຂອງນິຕິບຸກຄົນດັ່ງກ່າວນັ້ນ.

ໃນກໍລະນີ ທີ່ຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໃສ ກົມຊັບສິນທາງປັນຍາ ສາມາດຂໍໃຫ້ບຸກຄົນທີ່ແຈ້ງການໂອນສິດນັ້ນຍື່ນຂໍ້ມູນ ຫຼື ເອກະສານເພີ່ມເຕີມ.

ການໂອນສິດ ຈະບໍ່ມີຜົນສັກສິດຕໍ່ຄູ່ກໍລະນີ ຈົນກວ່າຈະມີການບັນທຶກການໂອນສິດ, ເວັ້ນເສຍແຕ່ພວກກ່ຽວມີໜັງສື ກ່ຽວກັບການໂອນສິດດັ່ງກ່າວມາກ່ອນແລ້ວ.

**ມາດຕາ 32 ການອະນຸຍາດນຳໃຊ້ສິດຕໍ່ເຄື່ອງໝາຍການຄ້າ**

ເຈົ້າຂອງສິດຕໍ່ເຄື່ອງໝາຍການຄ້າ ສາມາດອະນຸຍາດໃຫ້ບຸກຄົນອື່ນນຳໃຊ້ເຄື່ອງໝາຍການຄ້າ ຂອງຕົນເພື່ອສະແຫວງຫາຜົນປະໂຫຍດຈາກສິດດັ່ງກ່າວ ບາງສ່ວນ ຫຼື ທັງໝົດ ຊຶ່ງສາມາດດຳເນີນໂດຍການເຮັດສັນຍາ ການອະນຸຍາດນຳໃຊ້ແຕ່ບໍ່ຖືເປັນການໂອນກຳມະສິດເຄື່ອງໝາຍການຄ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຜູ້ອະນຸຍາດນຳໃຊ້ ຫຼື ຜູ້ໄດ້ຮັບອະນຸຍາດນຳໃຊ້ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ຕາມຂັ້ນຕອນດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ທີ່ມີການໂອນກຳມະສິດຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ, ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ໃຫ້ຖືວ່າການອະນຸຍາດນຳໃຊ້ດັ່ງກ່າວ ຖືກໂອນພ້ອມກັບການໂອນກຳມະສິດ ຂອງນິຕິບຸກຄົນນັ້ນເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ ຢູ່ໃນສັນຍາການອະນຸຍາດນຳໃຊ້ ຫຼື ໃນເອກະສານການໂອນກຳມະສິດດັ່ງກ່າວ.

ໃນກໍລະນີທີ່ ມີການໂອນກຳມະສິດຂອງນິຕິບຸກຄົນທີ່ໄດ້ຮັບການອະນຸຍາດນຳໃຊ້ສິດຕໍ່ເຄື່ອງໝາຍການຄ້າດັ່ງກ່າວ ສັນຍາການອະນຸຍາດນຳໃຊ້ສິດຕໍ່ເຄື່ອງໝາຍການຄ້າໃຫ້ແກ່ບຸກຄົນອື່ນ ຈະບໍ່ຖືວ່າເປັນໂມຄະ ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນສັນຍາການອະນຸຍາດນຳໃຊ້ສິດ.

## ໝວດທີ 4
## ການເປັນຜູ້ຕາງໜ້າໃນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດຳເນີນການອື່ນ

**ມາດຕາ 33 ບຸກຄົນທີ່ມີສິດເປັນຜູ້ຕາງໜ້າໃນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດຳເນີນການອື່ນ**

ບຸກຄົນທີ່ມີສິດຕາງໜ້າໃຫ້ແກ່ຜູ້ທີ່ມີສິດໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ໃນການດຳເນີນການຈົດທະບຽນ ແລະ ດຳເນີນການອື່ນມີ ດັ່ງນີ້:

1. ໃນກໍລະນີ ຄຳຮ້ອງດຽວທີ່ມີເຈົ້າຂອງ ຮ່ວມກັນຫຼາຍຄົນ ຕ້ອງແຕ່ງຕັ້ງບຸກຄົນໃດໜຶ່ງໃນນັ້ນເປັນຜູ້ຕາງໜ້າຍື່ນຄຳຮ້ອງໃຫ້ ພວກກ່ຽວ;
2. ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ;
3. ຜູ້ປະກອບການທາງດ້ານຊັບສິນທາງປັນຍາ;
4. ຜູ້ຕາງໜ້າ ຫຼື ພະນັກງານຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ບຸກຄົນທົ່ວໄປທີ່ຜູ້ຮ້ອງຂໍຈົດທະບຽນ ວ່າຈ້າງ.

ສຳລັບ ຜູ້ຮ້ອງຂໍຈົດທະບຽນທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຜ່ານຜູ້ປະກອບການທາງດ້ານຊັບສິນທາງປັນຍາ ຫຼື ທະນາຍຄວາມທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ ເທົ່ານັ້ນ.

ບຸກຄົນທີ່ມີສິດເປັນຜູ້ຕາງໜ້າ ຕ້ອງມີຄວາມຮູ້ດ້ານຊັບສິນທາງປັນຍາ ແລະ ມີທີ່ຢູ່ ຢູ່ ສປປ ລາວ ແລະ ຕ້ອງໄດ້ ຮັບອະນຸຍາດ ຈາກກົມຊັບສິນທາງປັນຍາ.

**ມາດຕາ 34 ການແຕ່ງຕັ້ງຜູ້ຕາງໜ້າ**

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ຕາມໃບມອບສິດທີ່ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ຜູ້ມອບສິດ.

ໃນກໍລະນີທີ່ ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫາກຍື່ນຮ່ວມກັນຫຼາຍຄົນ, ໃບມອບສິດຕ້ອງມີລາຍເຊັນຂອງໝົດທຸກຄົນ ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງຫາກເສຍຊີວິດ.

ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 35 ຂອງຂໍ້ຕົກລົງສະບັບນີ້ ແລະ ການກຳນົດອື່ນໃນໝວດນີ້, ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດແຕ່ງຕັ້ງຜູ້ຕາງໜ້າໄດ້ຫຼາຍຄົນ ໂດຍທີ່ຜູ້ຕາງໜ້າທັງໝົດດັ່ງກ່າວ ມີທີ່ຢູ່ບ່ອນດຽວກັນ.

**ມາດຕາ 35 ການມອບສິດ**

ການມອບສິດ ໝາຍເຖິງ ໃບມອບສິດ ທີ່ເຈົ້າຂອງສິດໄດ້ມອບໝາຍໃຫ້ບຸກຄົນໃດໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ.

ໃບມອບສິດ ຕ້ອງກຳນົດ:

1. ເງື່ອນໄຂ ແລະ ຂອບເຂດຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍໃຫ້ດຳເນີນການໃດໜຶ່ງທີ່ກ່ຽວຂ້ອງຢູ່ນຳກົມຊັບສິນທາງປັນຍາ;

3. ໄລຍະເວລາ, (ຖ້າມີ);
4. ຜູ້ມອບສິດສາມາດຍົກເລີກໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ຫາກບໍ່ສອດຄ່ອງ ກັບກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຫຼື ຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຈະຖືວ່າ ໃບມອບສິດໜຶ່ງນໍາໃຊ້ສະເພາະແຕ່ຄໍາຮ້ອງດຽວເທົ່ານັ້ນ. ໃນກໍລະນີໃບມອບສິດບໍ່ໄດ້ກໍານົດຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດໍາເນີນການອື່ນທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດ ຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄໍາຮ້ອງດັ່ງກ່າວ ຫຼື ການດໍາເນີນການອື່ນຫາກສໍາເລັດແລ້ວ.

ການມອບສິດທີ່ມີຜົນບັງຄັບໃຊ້ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ມອບສິດ. ໃນກໍລະນີຜູ້ອອກໃບມອບສິດເປັນນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສິດຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອໍານາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

ໃນກໍລະນີທີ່ ເຈົ້າຂອງເຄື່ອງໝາຍຮ່ວມບຸກຄົນໃດໜຶ່ງ ຫາກປະຕິເສດບໍ່ລົງລາຍເຊັນໃນໃບມອບສິດ ຈະຖືວ່າໃບມອບສິດດັ່ງກ່າວ ບໍ່ມີຜົນບັງຄັບໃຊ້.

### ມາດຕາ 36 ການສິ້ນສຸດການເປັນຜູ້ຕາງໜ້າ

ການເປັນຜູ້ຕາງໜ້າ ຈະສິ້ນສຸດລົງໃນກໍລະນີການມອບສິດຖືກຍົກເລີກ ໂດຍຜູ້ມອບສິດ ຫຼື ຜູ້ຕາງໜ້າຖອນຕົວ. ໃນກໍລະນີ ຜູ້ຕາງໜ້າໄດ້ຖອນຕົວຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາ ແລະ ຜູ້ມອບອໍານາດຮັບຊາບ.

## ໝວດທີ 5
## ການທົບທວນຄືນ ແລະ ການແກ້ໄຂຂໍ້ຂັດແຍ່ງ ທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ

### ມາດຕາ 37 ການທົບທວນຄືນ ແລະ ການແກ້ໄຂຂໍ້ຜິດພາດ

ກົມຊັບສິນທາງປັນຍາ ມີສິດທົບທວນຄືນການຈົດທະບຽນເຄື່ອງໝາຍການຄ້າ ໂດຍດໍາເນີນການທາງດ້ານບໍລິຫານຕາມຄວາມຈໍາເປັນ ເພື່ອການປ້ອງກັນ ແລະ ແກ້ໄຂຂໍ້ຜິດພາດ.

### ມາດຕາ 38 ການທົບທວນຄືນດ້ານບໍລິຫານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສະເໜີໃຫ້ກົມຊັບສິນທາງປັນຍາ ທົບທວນຄືນພາຍໃນ 90 ວັນ ພາຍຫຼັງມື້ອອກແຈ້ງການຂອງກົມ ການດໍາເນີນການຈົດທະບຽນເຄື່ອງໝາຍການຄ້າຂອງຕົນທີ່ມີຂໍ້ຜິດພາດ ຫຼື ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຂໍ້ຕົກລົງສະບັບນີ້ ຕາມແຕ່ກໍລະນີດັ່ງນີ້:

1) ສະເໜີຂໍດັດແກ້ຂໍ້ຜິດພາດທີ່ເກີດຈາກກົມຊັບສິນທາງປັນຍາ ໂດຍບໍ່ຄ່າບໍລິການ;
2) ສະເໜີຂໍດັດແກ້ຂໍ້ຜິດພາດທີ່ເກີດຈາກຜູ້ຮ້ອງຂໍຈົດທະບຽນ ໂດຍຈ່າຍຄ່າບໍລິການ;
3) ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ຊຶ່ງປະກອບມີຂໍ້ມູນດັ່ງນີ້:
    3.1. ເງື່ອນໄຂ ຫຼື ການຕົກລົງ ທີ່ຕ້ອງການໃຫ້ທົບທວນຄືນ;
    3.2. ຂໍ້ເທັດຈິງ ແລະ ພື້ນຖານທາງດ້ານກົດໝາຍ;

3.3. ມາດຕະການທີ່ສະເໜີໃຫ້ກົມຊັບສິນທາງປັນຍາພິຈາລະນາ.

ການສະເໜີຍັງສາມາດລວມເອົາ ຄຳຊີ້ແຈງ ຫຼື ການອະທິບາຍ ຊຶ່ງຜູ້ສະເໜີເຫັນວ່າ ຈະເປັນການສະໜັບສະໜູນໃຫ້ແກ່ການພິຈາລະນາຄືນໃໝ່ ຫຼື ສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໂດຍບໍ່ຈ່າຍຄ່າບໍລິການ.

**ມາດຕາ 39 ການສະເໜີໃຫ້ຢຸດຊົ່ວຄາວ**

ການສະເໜີໃຫ້ທົບທວນທາງດ້ານບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 38 ຂອງຂໍ້ຕົກລົງສະບັບນີ້ ອາດລວມເຖິງການສະເໜີໃຫ້ຢຸດຊົ່ວຄາວການປະຕິບັດຜົນການພິຈາລະນາຂອງກົມຊັບສິນທາງປັນຍາ ທີ່ຜູ້ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ຫຼື ສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ເພື່ອຄວາມຍຸຕິທຳ ໂດຍຄຳນຶງເຖິງຜົນປະໂຫຍດ ຂອງບຸກຄົນທີສາມ.

**ມາດຕາ 40 ການພິຈາລະນາຄືນໃໝ່**

ກົມຊັບສິນທາງປັນຍາ ຕ້ອງຮັບການສະເໜີທີ່ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ ຊຶ່ງຜູ້ສະເໜີ ຕ້ອງມີເຫດຜົນທີ່ພຽງພໍໃນການສະເໜີໃຫ້ທົບທວນ ຜົນການພິຈາລະນາ ທີ່ຕົນເຫັນວ່າ ບໍ່ສອດຄ່ອງຕາມ ຂໍ້ຕົກລົງສະບັບນີ້.

ໃນກໍລະນີຜູ້ສະເໜີບໍ່ພໍໃຈຕໍ່ຜົນການພິຈາລະນາຄືນໃໝ່ ສາມາດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໄປຍັງຄະນະກຳມະການພິຈາລະນາຂັ້ນສຸດທ້າຍຂອງກົມຊັບສິນທາງປັນຍາພາຍໃນ 30 ວັນ ນັບແຕ່ວັນອອກແຈ້ງການຂອງກົມຊັບສິນທາງປັນຍາ ກ່ຽວກັບຜົນການພິຈາລະນາດັ່ງກ່າວເປັນຕົ້ນໄປ ແລະ ຖ້າຜູ້ສະເໜີບໍ່ປະຕິບັດພາຍໃນໄລຍະເວລາດັ່ງກ່າວຖືວ່າຜູ້ກ່ຽວສະຫຼະສິດ.

**ມາດຕາ 41 ຂັ້ນຕອນການພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການນຳກົມຊັບສິນທາງປັນຍາ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ ມີສິດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໄປຍັງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ເພື່ອພິຈາລະນາໂດຍຈ່າຍຄ່າບໍລິການ.

ພະນັກງານວິຊາການຂອງກົມຊັບສິນທາງປັນຍາ ທີ່ມີສ່ວນຮ່ວມໃນ ການອະນຸຍາດ, ການຢັ້ງຢືນ, ການປະຕິເສດ ຫຼື ການພິຈາລະນາ ທີ່ກໍ່ໃຫ້ເກີດມີການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ຕ້ອງໃຫ້ຄຳຊີ້ແຈງກ່ຽວກັບຫຼັກການທາງດ້ານກົດໝາຍ ແລະ ຂໍ້ເທັດຈິງກ່ຽວກັບຜົນການພິຈາລະນາດັ່ງກ່າວ ເພື່ອເປັນຂໍ້ມູນໃຫ້ແກ່ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ສາມາດເຊີນຜູ້ຊ່ຽວຊານສະເພາະດ້ານມາໃຫ້ຄຳປຶກສາ. ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຕ້ອງດຳເນີນການພິຈາລະນາຕາມມາດຕານີ້ ແລະ ຕ້ອງບັນທຶກການຕົກລົງເປັນລາຍລັກອັກສອນ ຂອງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ໂດຍລະບຸຫຼັກການທາງດ້ານກົດໝາຍ ແລະ ຂໍ້ເທັດຈິງທີ່ກ່ຽວຂ້ອງ. ບົດບັນທຶກການຕົກລົງດັ່ງກ່າວ ຕ້ອງສົ່ງໃຫ້ຜູ້ສະເໜີຂໍໃຫ້ພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ເພື່ອຮັບຊາບ.

ການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານດັ່ງກ່າວ ຖືວ່າເປັນໂມຄະ ໃນກໍລະນີທີ່ຜູ້ສະເໜີບໍ່ສາມາດສະໜອງຂໍ້ມູນທີ່ຈຳເປັນ ຕາມທີ່ກຳນົດໄວ້ໃນຂໍ້ 3 ມາດຕາ 38 ຂອງຂໍ້ຕົກລົງສະບັບນີ້.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຕ້ອງສົ່ງສຳນວນຄຳສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ພ້ອມດ້ວຍບົດບັນທຶກການຕົກລົງຂອງຕົນ ໃຫ້ກົມຊັບສິນທາງປັນຍາອອກແຈ້ງການກ່ຽວກັບຜົນຂອງ

ການຕົກລົງຂອງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ໃຫ້ຄູ່ສະເໜີຊາບ ຊຶ່ງຖືວ່າ ເປັນການສິ້ນສຸດການພິຈາລະນາທາງດ້ານບໍລິຫານ.

**ມາດຕາ 42 ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ**

ກົມຊັບສິນທາງປັນຍາ ຕ້ອງສ້າງຕັ້ງຄະນະກຳມະການ ພິຈາລະນາຂັ້ນສຸດທ້າຍ ເພື່ອດຳເນີນການພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ກ່ຽວກັບການຢັ້ງຢືນ, ການປະຕິເສດ ຫຼື ຜົນການພິຈາລະນາ ກ່ຽວກັບຂັ້ນຕອນການຈົດທະບຽນເຄື່ອງໝາຍການຄ້າ.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຕ້ອງເປັນເອກະລາດ ແລະ ບໍ່ຂຶ້ນກັບພະແນກໃດພາຍໃນກົມຊັບສິນທາງປັນຍາ ຊຶ່ງສາມາດສ້າງຕັ້ງຂຶ້ນແບບຖາວອນ ຫຼື ຊົ່ວຄາວກໍໄດ້.

ບຸກຄົນທີ່ມີສ່ວນຮ່ວມໃນການຢັ້ງຢືນ, ການປະຕິເສດ ຫຼື ການກຳນົດເງື່ອນໄຂ ຫຼື ການຕົກລົງ ທີ່ກໍ່ໃຫ້ເກີດເປັນສາເຫດຂອງການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ບໍ່ສາມາດເຂົ້າຮ່ວມຢູ່ໃນຄະນະກຳມະການພິຈາລະນາຂັ້ນສຸດທ້າຍ.

## ໝວດທີ 6
## ການສ້າງສຳນວນເອກະສານຂຶ້ນໃໝ່

**ມາດຕາ 43 ສຳນວນເອກະສານເສຍຫາຍ ຫຼື ຊອກບໍ່ເຫັນ**

ໃນກໍລະນີ ສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຈົດທະບຽນເຄື່ອງໝາຍການຄ້າ ຫາກເກີດມີການເສຍຫາຍ ຫຼື ຊອກບໍ່ເຫັນ ກົມຊັບສິນທາງປັນຍາຕ້ອງສ້າງສຳເນົາສຳນວນເອກະສານດັ່ງກ່າວຂຶ້ນມາໃໝ່.

**ມາດຕາ 44 ການສ້າງສຳນວນເອກະສານຂຶ້ນໃໝ່**

ຖ້າສຳນວນເອກະສານ ຫຼື ເອກະສານອື່ນທີ່ພົວພັນເຖິງຄຳຮ້ອງ ຫຼື ການດຳເນີນການອື່ນ ຫາກເສຍ ຫຼື ຊອກບໍ່ເຫັນ ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານ ດັ່ງກ່າວ ນັ້ນຂຶ້ນໃໝ່. ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງ ຫຼື ເຈົ້າຂອງສຳນວນເອກະສານ ສົ່ງສຳເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສຳເນົາດັ່ງກ່າວ ລວມທັງເອກະສານ ຫຼື ສຳນວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ທີ່ບໍ່ມີການບັນທຶກໄວ້ ແຕ່ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ເຈົ້າຂອງສຳນວນເອກະສານນັ້ນຮັບຮູ້.

## ໝວດທີ 7
## ອົງການຄຸ້ມຄອງວຽກງານເຄື່ອງໝາຍການຄ້າ ແລະ ຊື່ການຄ້າ

**ມາດຕາ 45 ອົງການຄຸ້ມຄອງ**

ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບການພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ແລະ ອອກໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບໃຫ້ການບໍລິການກ່ຽວກັບການຮັບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງ, ເທດສະບານ, ນະຄອນ ແມ່ນປະຕິບັດຕາມການມອບໝາຍຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ.

**ມາດຕາ 46 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ຂໍ້ກົດໝາຍ, ອອກຄຳແນະນຳ, ແຈ້ງການກ່ຽວກັບເຄື່ອງໝາຍການຄ້າ;
2. ຄົ້ນຄ້ວາ ແລະ ນຳສະເໜີກະຊວງ ເພື່ອອອກນິຕິກຳ ແລະ ລະບຽບການໃນການຄຸ້ມຄອງ ແລະ ປົກປ້ອງເຄື່ອງໝາຍການຄ້າ;
3. ຮັບ ແລະ ພິຈາລະນາສຳນວນຄຳຮ້ອງຂໍຈົດທະບຽນ, ການຕໍ່ອາຍຸ, ການບັນທຶກການປ່ຽນຊື່ ຫຼື ທີ່ຢູ່, ການອະນຸຍາດນຳໃຊ້, ການໂອນສິດ ແລະ ການສະເໜີອື່ນກ່ຽວກັບເຄື່ອງໝາຍການຄ້າ;
4. ບັນທຶກ ແລະ ເກັບຮັກສາຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າ;
5. ໃຫ້ບໍລິການຄົ້ນຫາເຄື່ອງໝາຍການຄ້າໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ;
6. ຈົດທະບຽນ, ແຈ້ງປະຕິເສດ, ຍົກເລີກ ຫຼື ລຶບລ້າງ ແລະ ອື່ນໆກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ;
7. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;
8. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີໃຫ້ທົບທວນຄືນທາງດ້ານບໍລິຫານກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ;
9. ຄົ້ນຄວ້າ ແລະ ພິຈາລະນາຄຳສະເໜີ ການພິຈາລະນາຂັ້ນສຸດທ້າຍກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ;
10. ຊຸກຍູ້ ແລະ ສົ່ງເສີມວຽກງານການຈົດທະບຽນເຄື່ອງໝາຍການຄ້າ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ**

ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງ, ກວດຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຕາມເງື່ອນໄຂຕໍ່າສຸດ;
2. ນຳສົ່ງສຳນວນຄຳຮ້ອງ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການຕາມຂັ້ນຕອນຕໍ່ໄປ;
3. ມອບໝາຍຄວາມຮັບຜິດຊອບໃຫ້ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ ແລະ ນະຄອນ ຕາມຄວາມເໝາະສົມ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 48 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 49 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດເມື່ອໄດ້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ກ່ຽວກັບ ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ, ສະບັບ ເລກທີ 753 /ກວຕ, ລົງວັນທີ 20 ກັນຍາ 2012.

ຂໍ້ກຳນົດ ແລະ ຂໍ້ຕົກລົງໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ບໍ່ວຽງຄຳ ວົງດາລາ